# ບົດທີ 25

# ຊາວນາຊາເລັດໄລ່ພະເຢຊູອອກ



ກາເປນາອຸມ

**1** ບົດນີ້ເປັນບົດສຸດທ້າຍໃນເຫຼັ້ມນີ້ ທີ່ສອນເລື່ອງສະໄຫມປີທີ່ພະເຢຊູຫຽມຕົວປ່າວປະກາດ. ໃນບົດນີ້ເຮົາຈະຮຽນ ຢ່າງລະອຽດກ່ຽວກັບຄຳເທດສະຫນາທຳອິດຂອງພະເຢຊູ ໃນຂ່າວປະເສີດ, ຫນ້າເສຍດາຍທີ່ໄທບ້ານນັ້ນບໍ່ຢາກຟັງຄຳເທດສະຫນາທຳອິດນັ້ນ. ພະອົງເທດສະຫນາຢູ່ໃສ?

____________________________________________________________

*<u>ຝຶກຮຽນໂດຍວິທີການອະທິບາຍ</u>*

**2** ໃຫ້ອ່ານ ລູກາ 4:20-22 ໃນທຸກວັນນີ້ ເມື່ອພວກເຮົາທີ່ອ່ານຫນັງສືແລ້ວ ເຮົາຈະປິດກ່ອນຈະເອົາໄວ້. ໃນຂໍ້ 20 ພະເຢຊູບໍ່ໄດ້ປິດ ແຕ່ພະອົງຮຳຫນັງສືນັ້ນສົ່ງຄືນໃຫ້ເຈົ້ານາຍ. ເປັນຫຍັງພະເຢຊູຮຳໄວ້ແທນທີ່ຈະປິດໄວ້? ________________________________________

**3** ໃນ ລູກາ 4:22 ຜູ້ທີ່ຟັງພະເຢຊູເວົ້າກັນວ່າ "ຄົນຜູ້ນີ້ເປັນລູກໂຢເຊັບບໍ່ແມ່ນຫຼື" ຄືເຂົາບໍ່ເຂົ້າໃຈເລື່ອງພະກຳເນີດ ຂອງ ພະອົງ.ເຂົາເຂົ້າໃຈຜິດໃນດ້ານໃດ? ________________________

____________________________________________________________

*<u>ຝຶກຮຽນແບບວິທີສັງເກດ</u>*

*ໃຫ້ທ່ານອ່ານບົດເທດສະຫນາທຳອິດທີ່ຖືກລາຍງານໃນຂ່າວປະເສີດ ລູກາ 4:23-27*

**4** ເບິ່ງແລ້ວເຫມືອນວ່າ ຜູ້ທີ່ເຄີຍເປັນເພື່ອນບ້ານຫຼາຍສິບປີຢ່າງນັ້ນຄວນຈະຮັບຮູ້ພະເຢຊູ ເພາະເຂົາຮູ້ເລື່ອງພະເຢ ຊູດີ ແຕ່ບໍ່ເປັນຢ່າງນັ້ນ. ເບິ່ງທ່າທີຂອງໄທເມືອງນາຊາເລັດຕໍ່ພະເຢຊູ ເປັນຢ່າງໃດ? (ອ່ານ ລູກາ 4:24) __________________________________________

**5** ຄືຜູ້ທີ່ມີໂອກາດຟັງພະຄຳຂອງພະເຈົ້າ ຫຼາຍກວ່າຫມູ່ກໍແຕ່ບໍ່ສົນໃຈກໍມີ, ແມ່ນຄົນໃດກິນແຊບກວ່າ ຄົນທີ່ອີ່ມ ຫຼື ຄົນທີ່ກຳລັງຫິວ? __________________________________

**6** ພະເຢຊູເທດສະຫນາຈົບລົງໂດຍເຕືອນເພື່ອນບ້ານພີ່ນ້ອງວ່າ ຢ່າດູຖູກພະພອນທີ່ພະເຈົ້າປະທານໃຫ້. ແມ່ນ ເພາະເຫດໃດທີ່ໄທບ້ານບໍ່ນັບຖືພະອົງ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ເພາະເຂົາບໍ່ຮູ້ພະອົງ

ຂ. ເພາະເຂົາຮູ້ຈັກພະອົງຫນ້ອຍດຽວ

ຄ. ເພາະເຂົາຮູ້ຈັກພະອົງເກືອບ 30 ປີແລ້ວ

ຕອບ:

**1** *ໃນໂຮງທຳຢູ່ນາຊາເລັດ*

**2** *ເພາະຫນັງສືນັ້ນບໍ່ແມ່ນແບບເຮົາໃຊ້ນີ້, ເປັນຫນັງສືມ້ວນ*

**3** *ເຂົາບໍ່ຮູ້ວ່າ ພະເຢຊູເກີດຈາກຍິງພົມມະຈາລີໂດຍອຳນາດ ຂອງພະວິນຍານບໍລິສຸດ. (ຄຳຄ້າຍຄືກໍໄດ້)*

**4** *ເຂົາບໍ່ນັບຖືພະອົງ (ຄຳຄ້າຍຄືກໍໄດ້)*

**5** *ຄົນທີ່ກຳລັງຫິວ*

**6** *ຄ. ຖືກ*

**7** ໃນຄຳເທດສະໜານັ້ນພະເຢຊູຍົກຕົວຢ່າງ 2 ປະການຈາກພະຄຳພີເດີມເລື່ອງຄົນທີ່ຮັບພະພອນຈາກພະເຈົ້າ ໃນ ກໍລະນີສະເພາະ.

ກ. ຜູ້ທຳນວາຍເອລີຢາ ໄປຫາແມ່ຫມ້າຍໃດ ໃນ ລູກາ 4:26? ____________________

ຂ. ຜູ້ໃດໄປຫາຜູ້ທຳນວາຍ ເອລີຊາ ໃນ ລູກາ 4:27? __________________________

**8** ໃນ3 ຂໍ້ຕໍ່ໄປນີ້ ແມ່ນສອງຂໍ້ໃດທີ່ອ້າງເຖິງຊາດອິດສະລາເອນ? (ໃຫ້ຫມາຍ ເອົາສອງຂໍ້)

_______ ລູກາ 4:25 _______ ລູກາ 4:26 _______ ລູກາ 4:27

**9** ພວກຊາວຢິວເອີ້ນຊື່ປາແລັດສະຕິນວ່າ ເປັນປະເທດອິດສະລາເອນ, ປາແລັດສະຕິນເປັນຊື່ ທີ່ພວກຄົນໂລມຕັ້ງຊື່ ໃສ່ໃຫ້ໃຫມ່. ປະຊາຊົນໃນປະເທດອິດສະລາເອນເປັນຊາດໃດ? _____

**10** ທັງແມ່ຫມ້າຍໃນເມືອງຊາເລັບຕາ ແຂວງຊີໂດນ ແລະນາອາມານຊາວຊີເລຍ ບໍ່ໄດ້ເກີດໃນອິດສະລາເອນດັ່ງ ນັ້ນສອງຄົນນັ້ນເປັນຊາວຢິວບໍ່? ______________________________

**11** ກ. ແມ່ນໃຜໃສ່ຊື່ປະເທດຂອງຄົນຢິວນັ້ນວ່າ ປາແລັດສະຕິນ? ____________________

ຂ. ຄົນຢິວເອງຮ້ອງປະເທດນັ້ນຢ່າງໃດ? ____________________________________

*ໃນທຸກວັນນີ້ ຄົນຢິວທີ່ຢູ່ໃນ ປະເທດ ປາແລັດສະຕິນ ມັກເອີ້ນຊື່ປະເທດນັ້ນວ່າ "ອິດສະລາເອນ" ຄືກັນ.*



**12** ໃນສະໄຫມພະຄຳພີເດີມ ພະເຈົ້າພົວພັນກັບຊາດຢິວຫຼາຍກວ່າຊາດອື່ນໆ ແຕ່ໃນຕົວຢ່າງ 2 ປະການ ທີ່ພະເຢຊູ ຍົກມາໃນບົດເທດສະໜານີ້ ແມ່ນຄົນຢິວ ຫຼືຄົນຕ່າງຊາດ.

ກ. ທີ່ຖືວ່າພະພອນຂອງພະເຈົ້າ ມີຄຸນຄ່າ? __________________________________

ຂ. ທີ່ຖືວ່າພະພອນຂອງພະເຈົ້າ ບໍ່ສຳຄັນຫຼາຍປານໃດ? _________________________

ຕອບ:

**7** *ກ. ແມ່ຫມ້າຍໃນເມືອງຊາເລັບຕາ ແຂວງຊີໂດນ ຂ. ນາອາມານ ຊາວຊີເລຍ*

**8** *ລູກາ 4:25 ລູກາ 4:27*

**9** *ຢິວ*

**10** *ບໍ່*

**11** *ກ. ພວກຈັກກະພັດໂລມ ຂ. ອິສະລາເອນ*

**12** *ກ. ຄົນຕ່າງຊາດ ຂ. ຊາດຢິວ*

**13** ໃນບົດເທດສະໜານີ້ຢູ່ນາຊາເລັດພະເຢຊູຍົກເລື່ອງຈາກຊາດຢິວ ແລະຄົນຕ່າງຊາດ.

ກ. ແມ່ນພວກໃດທີ່ຮັບພະພອນຈາກພະເຈົ້າ ບໍ່ຫຼາຍແຕ່ຖືວ່າມີຄຸນຄ່າຫຼາຍ? ___________

ຂ. ພວກໃດຮັບພະພອນຈາກພະເຈົ້າຫຼາຍແຕ່ເລີຍດູຖູກພະພອນນັ້ນ? _______________

**14** ດັ່ງນັ້ນ ບາບຂອງຄົນຢິວໃນເມືອງນາຊາເລັດ ຄືເຂົາດູ ________________ ພະພອນດ້ານວິນຍານທີ່ພະເຈົ້າປະ ທານໃຫ້ເຂົາ. (ຕື່ມຄວາມທີ່ຂາດ)

**15** ເຊັ່ນດຽວກັນ ຄົນຄຣິສຕຽນເຮົາຄວນຈະລະວັງຕົວບໍ່ດູຖູກສິດທີ່ພະເຈົ້າປະທານໃຫ້ເຮົາ ພະເຈົ້າຊົງໂຜດໃຫ້ເຮົາມີ ສິດອ່ານພະທຳຂອງພະເຈົ້າ, ຄັນເຮົາຄຸ້ນເຄີຍກັບເລື່ອງໃນພະຄຳພີ ແຕ່ບໍ່ປະຕິບັດເຮັດຕາມໃນຊີວິດ ຢ້ານວ່າເຮົາຈະຕົກແບບດຽວກັນກັບ ໄທນາຊາເລັດເຫຼົ່ານັ້ນທີ່ຄຸ້ນເຄີຍກັບພະເຢຊູຈົນກວ່າເຂົາໄລ່ພະອົງອອກໄປ. ແມ່ນຄົນໃດທີ່ຖືພະຄຳພີມີຄຸນຄ່າຫຼາຍ? (ເລືອກ)

ກ. ຄົນທີ່ຊອກຫາພະຄຳພີຍາກຫຼາຍ

ຂ. ຄົນທີ່ຊື້ພະຄຳພີໄດ້ງ່າຍ

**16** ໄທເມືອງນາຊາເລັດດູຖູກໃຜ? ____________________________________________

**17** ພວກຊາດຢິວເອີ້ນປະເທດປາແລັດສະຕິນວ່າຢ່າງໃດ? _________________________

*ຮຽນວິທີສັງເກດອີກ*

**18** ຫຼາຍເທື່ອຄົນທີ່ມີຄວາມສຳພັນກັບພະເຈົ້າໂດຍອ່ານພະຄຳພີ ແລະການຊົງນຳຈາກພະວິນຍານກໍເລີຍຖືວ່າເປັນ ການທຳມະດາ. ຄົນຢິວໃນສະໄໝພະຄຳພີເດີມມີພະທຳຂອງພະເຈົ້າຢູ່, ມີຜູ້ປ່າວປະກາດເລື່ອງການສະເດັດມາຂອງພະເມຊີ ອາ ຄືພະເຢຊູ ແຕ່ຫຼາຍເທື່ອຕໍ່ຫຼາຍທີເຂົາຫຼົງລືມພະເຈົ້າໄປ. ໄທເມືອງນາຊາເລັດຢູ່ໃກ້ກັບພະເຢຊູ ເກືອບ 30 ປີ ກິນເຂົ້າກິນນ້ຳກັບພະອົງ ອາດຈະໃຊ້ໂຕະຕັ່ງທີ່ພະອົງສ້າງ ແຕ່ມາເຖິງພະອົງຈະເທດສະໜາເຂົາໄລ່ໃຫ້ພະອົງອອກໄປ.ເມື່ອພະເຢຊູຊີ້ບອກບາບຂອງເຂົາໄທເມືອງນາຊາເລັດເຮັດຫຍັງ?(ໃຫ້ໝາຍເອົາຂໍ້ທີ່ຖືກ)

ກ. ສາລະພາບບາບ

ຂ. ຢູ່ເສີຍໆ

ຄ. ເຂົາຈະບໍ່ຮັບສາລະພາບແລ້ວເຂົາຄຽດພະອົງ

ຕອບ:

***13*** *ກ. ຄົນຕ່າງຊາດ ຂ. ຊາດຢິວ*

***14*** *ທຸກ*

***15*** *ກ.ຖືກ*

***16*** *ພະເຢຊູ*

***17*** *ອິດສະລາເອນ*

***18*** *ຄ.ຖືກ*

**19** ກ. ໃນ ລູກາ 4:29 ເຂົາເຮັດຢ່າງໃດ ຕໍ່ພະອົງ? ______________________________

ຂ. ໃນ ລູກາ 4:30 ພະອົງເຮັດຫຍັງ? ____________________________________

**20** ກ. ເຫດການນີ້ເກີດຂຶ້ນໃນທ້າຍສະໄໝປີໃດ? ______________________________

ຂ. ພະອົງຕ້ອງອອກຈາກບ້ານໄປ ໃນເມືອງໃດ? ______________________________

ຄ. ພະອົງຍ້າຍໄປຢູ່ໃສ? ____________________________________________

ງ. ຈາກບ່ອນນັ້ນພະອົງອອກໄປປ່າວປະກາດໃນແຂວງໃດ? ____________________

ຈ. ພະອົງປ່າວປະກາດຢູ່ແຂວງຄາລີເລໃນສະໄໝໃດ? _______________________

| | |
|---|---|
| ຝຶກ: | ໃຫ້ທ່ານເປີດເບິ່ງແບບແຜນຢູ່ໜ້າປົກບົດ 24 ແລ້ວໃນຫ້ອງທີ 10 ໃຫ້ຂຽນຄວາມວ່າ "ເຂົາໄລ່ພະອົງອອກຈາກນາຊາເລັດ" ຕໍ່ໄປໃນເວລາໃດທີ່ຈະທວນຄືນເລື່ອງສະໄໝ ປີທີ່ພະເຢຊູຕຽມ ຕົວ ທ່ານກັບໄປເບິ່ງແບບແຜນໃນຕາຕະລາງນັ້ນໄດ້. |

**21** ໃຫ້ທ່ານຮັບພິຈາລະນາກ່ຽວກັບການກະທຳຂອງໄທເມືອງນາຊາເລັດ. ເທື່ອໃດທີ່ເຮົາເຮັດບາບແຕ່ບໍ່ຍອມຮັບສາ ລະພາບບາບນັ້ນ ມັນບໍ່ໄດ້ຢູ່ບ່ອນເກົ່າຕໍ່ໄປ, ຄວາມບາບນັ້ນຈະເກີດມີຜົນເປັນບາບອີກຫຼາຍກວ່າເກົ່າ. ເອເຟໂຊ 4:30 ບອກວ່າ ບາບນັ້ນເຮັດໃຫ້ພະວິນຍານບໍລິສຸດເສຍພະໄທ.

ກ. ໃນຂໍ້ 31 ຈົ່ງຖິ້ມຫຍັງ? ____________________________________________

ຂ. ໃນຂໍ້ 32 ຈົ່ງມີໃຈຢ່າງໃດ? __________________________________________

**22** ການບໍ່ຮັບສາລະພາບບາບເປັນບາບທີ່ນຳເອົາບາບອື່ນໆ ເຂົ້າມາ ຕໍ່ໄປຈະເຮັດໃຫ້ພະວິນຍານບໍລິສຸດເສຍພະໄທ. ຜົນສຸດທ້າຍ ຜູ້ເຮັດບາບອາດຈະບໍ່ສຳນຶກຜິດເພາະຜູ້ກ່ຽວໄດ້ເຮັດໃຫ້ພະວິນຍານເສຍ _______________ (ຕື່ມຄວາມທີ່ຂາດ)

**23** ຜົນສຸດທ້າຍ ຄົນດື້ບໍ່ຍອມສາລະພາບບາບຢ່າງໄທນາຊາເລັດ ເຮັດໃຫ້ໃຜເສຍພະໄທ?

________________________________________________________________

ຕອບ:

**19** *ກ. ຊຸກພະອົງອອກຈາກເມືອງ (ເພື່ອຈະຊຸກພະອົງລົງໜ້າຜາ)*

*ຂ. ຍ່າງຜ່ານຖ້າມກາງເຂົາພົນໄປ*

**20** *ກ. ຕຽມຕົວ ຂ. ນາຊາເລັດ ຄ. ກາເປນາອູມ ງ. ຄາລີເລ ຈ. ຊື່ສຽງດີ*

**21** *ກ. ໃຈຂົມຂື່ນ ໃຈໂມໂຫໂຫໂສ ໆລໆ*

*ຂ. ໃຈເມດຕາ ໃຈເອັນດູ ອະໄພໂທດໃຫ້ກັນແລະກັນ*

**22** *ພະໄທ (ໃຈ)*

**23** *ພະວິນຍານບໍລິສຸດ*

**24** ໃນລາຍຊື່ຕໍ່ໄປນີ້ ມີອັນໃດທີ່ເປັນພະພອນຈາກພະເຈົ້າ ຊຶ່ງເຮົາອາດຈະລືມຂອບຄຸນພະເຈົ້າ? (ໃຫ້ຫມາຍໄວ້)

ກ. ________ ຄອບຄົວ

ຂ. ________ ອາຫານເຄື່ອງນຸ່ງ

ຄ. ________ ສິດນະມັດສະການພະເຈົ້າ

ງ. ________ ພະຄຳພີ

ຈ. ________ ສຸຂະພາບດີ

ສ. ________ ຄວາມສາມາດອ່ານໄດ້ຂຽນເປັນ

ຊ. ________ ແດດ ແລະ ຝົນ

*ຢ່າລືມບົດເສັງ!*

*ຫຼັກສູດ ສ.ອ.ນ. ມັດທາຍ ເຫຼັ້ມ 2 ສຳເລັດແລ້ວ ໃນເວລາຕໍ່ໄປກ່ອນຈະຕັ້ງຕົ້ນຮຽນຈາກ ເຫຼັ້ມ 3 ໃຫ້ທ່ານກັບໄປອ່ານ ຈາກທັງ 3 ຕອນໃນພະຄຳພີ ມັດທາຍ 3:1 ເຖິງ 4:11, ລູກາ 4:16-30 ແລະ ໂຢຮັນ ບົດ 1 ເຖິງບົດ 4.*

*ພົບກັນອີກໃນ ເຫຼັ້ມທີ 3*

ຕອບ:

***24*** *ທັງຫມົດ*